# ສິດທິ ແລະ ຄວາມຮັບຜິດຊອບ ຂອງ WA Cares Fund

**WA Cares Fund**
**Rights and Responsibilities**

| | |
|---|---|
| ຊື່ຂອງຜູ້ໄດ້ຮັບຜົນປະໂຫຍດ | |
| ເລກ WA Cares ID | |

## ສິດທິຂອງທ່ານ

ການມີເງື່ອນໄຂໄດ້ຮັບສະວັດດີການຊ່ວຍເຫລືອຫມາຍຄວາມວ່າທ່ານໄດ້ຖືກອະນຸມັດໃຫ້ໄດ້ຮັບການບໍລິການແລະການອູ້ມຊູທຸກໆຢ່າງທີ່ WA Cares Fund ເອົາໃຫ້,ແລະທ່ານຈະເລືອກເອົາອັນໃດທີ່ທ່ານຕ້ອງການທີ່ຈະໃຊ້.

**ທ່ານມີສິດທິທີ່ຈະ:**

- ຖືກປະຕິບັດນຳດ້ວຍກຽດສັກສີ,ຄວາມນັບຖື,ແລະໂດຍປາສຈາກການແບ່ງແຍກຊົນຊັ້ນວັນນະ.
- ເລືອກເອົາການບໍລິການທີ່ຖືກອະນຸມັດໃຫ້ທີ່ຕອບສະນອງຄວາມຕ້ອງການຂອງທ່ານ,ເມື່ອມີເງື່ອນໄຂໄດ້ຮັບ.
- ເລືອກເອົາຫລືປ່ຽນຜູ້ໃຫ້ການບໍລິການລະຍະຍາວແລະການອູ້ມຊູ.
- ໄດ້ຮັບການແຈ້ງການກ່ຽວກັບການພິຈາລະນາເບິ່ງເງື່ອນໄຂໄດ້ຮັບ.
- ໄດ້ຮັບຫນັງສືເອກສານໃນແບບຊອບໃຈຫລາຍກວ່າຂອງທ່ານ.
- ໄດ້ຮັບຫນັງສືເອກສານໃນພາສາຊອບໃຈຫລາຍກວ່າຂອງທ່ານ.
- ມີການບໍລິການນາຍແປພາສາຖືກເອົາໃຫ້ໂດຍບໍ່ຄິດຄ່າເງິນແນວໃດ.
- ທຳການຮ້ອງທຸກໂດຍປາສຈາກຄວາມຢ້ານກົວຕໍ່ອັນຕະລາຍ.
- ແຕ່ງຕັ້ງຫລືເອົາອອກຜູ້ໃຊ້ທີ່ຖືກອະນຸຍາດໃສ່ບັນຊີຂອງທ່ານ.
- ປະຕິເສດທີ່ຈະຕອບຄຳຖາມຫລືເຂົ້າຮ່ວມນຳໃນການດຳເນີນການພິຈາລະນາເບິ່ງເງື່ອນໄຂຮັບເອົາ.ອັນນີ້ຈະສະທ້ອນເຖິງຜົນອອກມາໃນເງື່ອນໄຂຮັບເອົາແລະການເຂົ້າເຖິງສະວັດດີການຊ່ວຍເຫລືອ.
- ການພິຈາລະນາເບິ່ງການອຸທອນໂດຍກົມ.

## ຄວາມຮັບຜິດຊອບຂອງທ່ານ

**ທ່ານຕ້ອງຮັບຜິດຊອບສຳລັບ:**

- ການເລືອກເອົາຜູ້ໃຫ້ການບໍລິການລະຍະຍາວແລະການອູ້ມຊູຄົນນຶ່ງຫລືຫລາຍຄົນເພື່ອຈະເອົາການບໍລິການທີ່ຖືກອະນຸມັດທີ່ຕ້ອງການ.
- ການເຈລະຈາໄກ່ເກັ່ຽການໃຫ້ການບໍລິການແລະອັດຕລາການຈ່າຍເງິນນຳຜູ້ໃຫ້ການບໍລິການລະຍະຍາວແລະການອູ້ມຊູຄົນນຶ່ງຫລືຫລາຍຄົນພາຍໃນຂອບເຂດກຳນົດຂອງການບໍລິການທີ່ຖືກອະນຸມັດ.
- ການອະນຸມັດຫລືການປະຕິເສດການອະນຸມັດລ່ວງຫນ້າກ່ອນການສົ່ງໃຫ້ຂອງການບໍລິການຂອງຜູ້ໃຫ້ບໍລິການລະຍະຍາວແລະການອູ້ມຊູ.
- ການແຈ້ງບອກກົມກ່ຽວກັບຜູ້ຕາງຫນ້າຕາມກົດຫມາຍຜູ້ທີ່ຈະປະຕິບັດຕົວໃນນາມຂອງທ່ານ.
- ການແຈ້ງບອກກົມກ່ຽວກັບການປ່ຽນແປງໃນບ່ອນຢູ່ອາສັຍ,ລາຍລະອຽດການຕິດຕໍ່ຫາ,ຫລືຊື່ພາຍໃນ 30 ວັນຕາມປະຕິທິນຂອງການປ່ຽນແປງ.
- ການແຕ່ງຕັ້ງຜູ້ໃຊ້ທີ່ຖືກອະນຸຍາດໃສ່ບັນຊີຂອງທ່ານ,ຖ້າຕ້ອງການ.
- ການຕີຄວາມຫມາຍໃນຄວາມຮັບຜິດຊອບຂອງຜູ້ໃຊ້ທີ່ຖືກອະນຸຍາດຄົນໃດຄົນນຶ່ງ.
- ການເອົາສະພາບແວດລ້ອມທີ່ປອດພັຍໃຫ້ສຳລັບຜູ້ໃຫ້ການບໍລິການລະຍະຍາວແລະການອູ້ມຊູຜູ້ທີ່ສົ່ງການບໍລິການໃຫ້;ແລະຖ້າຫາກວ່າໄດ້ຮັບ,ເກັບຮັກສາຜົນອອກມາຂອງການກວດເບິ່ງເບື້ອງຫລັງຂອງຜູ້ໃຫ້ການບໍລິການນັ້ນໄວ້ເປັນຄວາມລັບສ່ວນຕົວໂດຍປະຕິບັດຕາມມາຕຣາ 43.43 RCW.
- ການຍື່ນເອກສານທີ່ຕ້ອງການໃຫ້ WA Cares ຫລືຜູ້ໃຫ້ການບໍລິການເມື່ອຖືກຂໍຮ້ອງເອົາ.

## ການບໍລິການຈົດຊື່ລົງທະບຽນຂອງຜູ້ປ່ອນບັດເລືອກຕັ້ງ

ກົດຫມາຍ National Voter Registration Act of 1993 ກຳນົດໃຫ້ທຸກໆຣັດທີ່ຈະເອົາຄວາມຊ່ວຍເຫລືອຈົດຊື່ລົງທະບຽນປ່ອນບັດເລືອກຕັ້ງໃຫ້ໂດຍຜ່ານຫ້ອງການຊ່ວຍເຫລືອສາທາລະນະຊົນຂອງເຂົາເຈົ້າ.ການຮ້ອງຂໍທີ່ຈະຈົດຊື່ຫລືການປະຕິເສດທີ່ຈະຈົດຊື່ເພື່ອປ່ອນບັດເລືອກຕັ້ງຈະບໍ່ສະທ້ອນເຖິງການບໍລິການຫລືຈຳນວນການຊ່ວຍເຫລືອທີ່ທ່ານຈະໄດ້ຮັບ.ຖ້າຫາກວ່າທ່ານຕ້ອງການຄວາມຊ່ວຍເຫລືອໃນການຂຽນປະກອບໃບຟອມຈົດຊື່ລົງທະບຽນປ່ອນບັດເລືອກຕັ້ງ,ພວກເຮົາຈະຊ່ວຍເຫລືອທ່ານ.ຄຳຕັດສິນໃຈຂອງທ່ານທີ່ຈະຈົດຊື່ຫລືທີ່ຈະປະຕິເສດທີ່ຈະຈົດຊື່ຈະຖືກເກັບຮັກສາໄວ້ເປັນຄວາມລັບແລະຈະຖືກໃຊ້ສຳລັບຈຸດປະສົງຂອງການຈົດຊື່ລົງທະບຽນປ່ອນບັດເລືອກຕັ້ງເທົ່ານັ້ນ.

ຖ້າຫາກວ່າທ່ານເຊື່ອວ່າຄົນໃດຄົນນຶ່ງໄດ້ຣົບກວນສິດທິຂອງທ່ານທີ່ຈະຈົດຊື່ລົງທະບຽນຫລືທີ່ຈະປະຕິເສດທີ່ຈະຈົດຊື່ເພື່ອປ່ອນບັດເລືອກຕັ້ງ,ສິດທິຂອງທ່ານໃນຄວາມລັບສ່ວນຕົວໃນການຕັດສິນໃຈວ່າຈະຈົດຊື່ລົງທະບຽນຫລືບໍ່ຫລືໃນການຮ້ອງຂໍຈົດຊື່ເພື່ອຈະປ່ອນບັດເລືອກຕັ້ງ,ຫລືສິດທິຂອງທ່ານທີ່ຈະເລືອກເອົາພັກການເມືອງຂອງທ່ານເອງຫລືຄວາມຊອບໃຈທາງດ້ານການເມືອງອື່ນໆ,ທ່ານຈະຍື່ນຄຳຮ້ອງທຸກໄດ້ນຳ:

Washington State Elections Office
PO Box 40229
Olympia, WA  98504 – 0229
1 (800) 448-4881

| ຄວາມຊ່ວຍເຫລືອ |
|---|
| ຕິດຕໍ່ຫາ WA Cares ເພື່ອຄວາມຊ່ວຍເຫລືອ: 1-884-CARE4WA (844-227-3492). |

| ລາຍເຊັນຂອງຜູ້ໄດ້ຮັບຜົນປະໂຍດຫລືຜູ້ຕາງໜ້າຕາມກົດໝາຍ | | |
|---|---|---|
| ໂດຍການເຊັນຊື່ໃສ່,ທ່ານກຳລັງຮັບຮູ້ວ່າທ່ານໄດ້ຮັບສິດທິແລະຄວາມຮັບຜິດຊອບຂອງທ່ານ. | | |
| ລາຍເຊັນຂອງຜູ້ໄດ້ຮັບຜົນປະໂຍດ | ວັນທີ | ຊື່ຂຽນເປັນຕົວພິມ |
| ລາຍເຊັນຂອງຜູ້ຕາງໜ້າຕາມກົດໝາຍ (ຖ້າກ່ຽວນຳ) | ວັນທີ | ຊື່ຂຽນເປັນຕົວພິມ |
| ລາຍເຊັນຂອງພະຍານ (ຖ້າເຊັນຊື່ດ້ວຍຕົວ "X") | ວັນທີ | ຊື່ຂຽນເປັນຕົວພິມ |

**ຄຳແຈ້ງການສຳລັບລູກຄ້າ ແລະ ພະນັກງານ (Title VI ແລະ VII):** Washington State Department of Social and Health Services ເປັນນາຍຈ້າງທີ່ໃຫ້ໂອກາດເທົ່າທຽມກັນ ແລະ ບໍ່ແບ່ງແຍງຊົນຊັ້ນວັນນະຢູ່ໃນທຸກໆຂະແໜງຂອງວຽກງານທຸກໆຢ່າງ, ໂຄງການ ແລະ ການບໍລິການຂອງເຂົາເຈົ້າໃສ່ພື້ນຖານຂອງອາຍຸ, ເພດ, ຄວາມເຊື່ອຖືທາງເພດ, ເພດ, ບຸກຄະລິກລັກສະນະ/ການສະແດງອອກມາທາງເພດ, ສະພາບການແຕ່ງງານ, ຜິວພັນ, ລັດທິ, ສີສັນ, ເຊື້ອຊາດດັ້ງເດີມ, ສາສະນາ ຫລື ຄວາມເຊື່ອຖື, ການພົວພັນທາງການເມືອງ, ສະພາບການທະຫານ, ນັກຮົບເກົ່າຖືກປົດຢ່າງມີກຽດ, ສະພາບນັກຮົບເກົ່າສະໄໝວຽດນາມ, ແຍກອອກມາໃນໝໍ່ໆມານີ້ຫລື ນັກຮົບເກົ່າສະພາບປົກປ້ອງ, ການປາກົດມີຄວາມເສັຽອົງຄະທາງຄວາມຮູ້ສຶກ, ຈິດໃຈ, ຮ່າງກາຍ ຫລື ການໃຊ້ໝານຳທາງທີ່ຖືກຝຶກຝົນມາ ຫລື ສັດບໍລິການໂດຍບຸກຄົນທີ່ມີຄວາມເສັຽອົງຄະ, ຄ່າແຮງງານທີ່ເທົ່າທຽມກັນ ຫລື ຮາຍຣະອຽດພັນທຸກັມ.